# ຜົນສຳເລັດການຈັດຕັ້ງປະຕິບັດຫຼັກສູດຂັ້ນ ປ.1 ສົກຮຽນ 2019 - 2020

## ສື່ການຮຽນການສອນສະບັບປັບປຸງໃໝ່ສຳລັບຫ້ອງຮຽນ

### ຕົວເລກທີ່ຈັດຕັ້ງປະຕິບັດ

**18** ແຂວງ
**148** ເມືອງ

ໂຮງຮຽນ ປະຖົມສຶກສາ
**8.747** ແຫ່ງ

ນັກຮຽນ ຂັ້ນ ປ.1
**162.342** ຄົນ (ເພດຍິງ 47%)

### ໄດ້ສະໜອງສື່ການຮຽນການສອນຫຍັງແດ່?

ປຶ້ມແບບຮຽນ 3 ວິຊາ **856.000** ຫົວ
ຄູ່ມືຄູ 6 ວິຊາ **146.300** ຫົວ

ຊຸດອຸປະກອນຄູ **9.105** ຊຸດ, ລວມມີ:

- ປຶ້ມນິທານ **351.000** ຫົວ
- ປຶ້ມອ່ານເສີມ **540.000** ຫົວ
- ຊຸດອຸປະກອນຄູສຳລັບໂຮງຮຽນຢູ່ເຂດຫ່າງໄກສອກຫຼີກ **650** ຊຸດ

## ຝຶກອົບຮົມອົບຮົມຄູທົ່ວປະເທດ

### ມີການຝຶກອົບຮົມແນວໃດ?

ຄູຝຶກຫຼັກແຫຼ່ງ **59** ຄົນ (ຍິງ 36%)
ຄູຝຶກຂັ້ນແຂວງ **611** ຄົນ (ຍິງ 37%)
ຝຶກອົບຮົມ 6 ວັນ **483** ຄັ້ງ

### ມີໃຜແດ່ທີ່ໄດ້ຮັບການຝຶກອົບຮົມ?

ຄູຂັ້ນ ປ.1 ຈຳນວນ **9.662** ຄົນ (ຍິງ 60% )

ຜູ້ອຳນວຍການໂຮງຮຽນປະຖົມ **6.300** ຄົນ (ຍິງ 22%)

ຄູສຶກສານິເທດ ແລະ ພະນັກງານສະໜັບສະໜູນຂັ້ນເມືອງ **551** ຄົນ (ຍິງ 27%)

### ມີການຊ່ວຍເຫຼືອຫຍັງແດ່ໃຫ້ແກ່ຄູໃນໄລຍະສົກຮຽນ?

ຈັດຕັ້ງປະຕິບັດໃນ **32** ເມືອງເປົ້າໝາຍ

ໂຮງຮຽນທີ່ໄດ້ຮັບການສະໜັບສະໜູນ ແລະ ຕິດຕາມໂດຍໃຊ້ເຄື່ອງມືໂກໂບ (Kobo toolbox) **2.386** ແຫ່ງ

ວິດີໂອສຳລັບການພັດທະນາຄູ **20** ວິດີໂອກຳລັງຢູ່ໃນຂັ້ນຕອນການຜະລິດ

## ການເຜີຍແຜ່ຜ່ານສື່ຕ່າງໆ

### ລາຍການຮຽນຮູ້ຮ່ວມກັນແມ່ນຫຍັງ?

ລາຍການຮຽນຮູ້ຮ່ວມກັນແມ່ນລາຍການທີ່ມ່ວນຊື່ນຮູບແບບໃໝ່ທີ່ອອກແບບມາສະເພາະສຳລັບເດັກນ້ອຍຊັ້ນປະຖົມຄຽງຄູ່ກັບຫຼັກສູດສະບັບປັບປຸງໃໝ່

ອອກອາກາດຜ່ານ **2** ຊ່ອງໂທລະພາບແຫ່ງຊາດ

**15** ຕອນ ລວມມີພາກກະຕູນອະນິເມຊັນ ແລະ ພາກເລົ່າເລື່ອງ

ຖືກເປີດຊົມ **55.000** ຄັ້ງໃນຢູທູບ




### ມີແຜ່ນພັບຈຳນວນເທົ່າໃດທີ່ໄດ້ແຈກຢາຍ?

**39.321** ແຜ່ນພັບຫຼາຍຮູບແບບສຳລັບພະນັກງານສຶກສາ

**235.659** ປຶ້ມແຜ່ນພັບນ້ອຍສຳລັບຜູ້ປົກຄອງ ແລະ ເດັກຂັ້ນ ປ. 1

### ການເຜີຍແຜ່ຜ່ານສື່ຕ່າງໆແມ່ນຫຍັງ?

ປະກາດນຳໃຊ້ຫຼັກສູດໄດ້ເຜີຍແຜ່ຜ່ານສື່ໜັງສືພິມ, ໂທລະພາບ ແລະ ວິທະຍຸທັງໝົດ **83** ສື່

**2** ໂຄສະນາທາງໂທລະພາບ ແລະ **1** ໂຄສະນາທາງວິທະຍຸ ພ້ອມກັບປະກາດທາງໂທລະໂຄ່ງບ້ານ **4.000** ບ້ານ

ລົງເນື້ອໃນຜ່ານສື່ອອນລາຍ ແລະ ເວັບໄຊເປົ້າໝາຍ **117** ຄັ້ງ



ຮູບພາບ: ນັກຮຽນພ້ອມກັບປຶ້ມແບບຮຽນສະບັບປັບປຸງໃໝ່



ຮູບພາບ: ການສົ່ງສື່ການຮຽນການສອນ ໂດຍລົດຈັກ

# ການປັບປຸງຜົນການຮຽນສຳລັບເດັກຍິງ ແລະ ຊາຍໃຫ້ຫຼາຍຂຶ້ນ

ນັບແຕ່ປີ 2015, ກະຊວງສຶກສາທິການ ແລະ ກິລາ (ສສກ) ໄດ້ພັດທະນາ ແລະ ຈັດຕັ້ງປະຕິບັດຫຼັກສູດຊັ້ນປະຖົມສະບັບປັບປຸງໃໝ່ ຄຽງຄູ່ກັບສື່ການຮຽນການສອນສະບັບປັບປຸງໃໝ່ສຳລັບນັກຮຽນ ແລະ ການຝຶກອົບຮົມໃໝ່ສຳລັບຄູສອນ. ການປັບປຸງສື່ການຮຽນການສອນໃນຫຼັກສູດສະບັບປັບປຸງໃໝ່ແມ່ນດຳເນີນໄປເທື່ອລະຂັ້ນຮຽນທຸກໆປີຈົນຮອດຂັ້ນ ປ.5 ເຊິ່ງຂັ້ນ ປ.1 ແມ່ນເລີ່ມຈັດຕັ້ງປະຕິບັດໃນເດືອນກັນຍາ 2019.

ຫຼັກສູດຊັ້ນປະຖົມສຶກສາສະບັບປັບປຸງໃໝ່ໄດ້ປະກອບສ່ວນສຳຄັນເຂົ້າໃນການຍົກລະດັບຄຸນນະພາບຜົນການຮຽນຂອງເດັກນ້ອຍລາວ ເພາະວ່າຫຼັກສູດດັ່ງກ່າວນີ້ ໄດ້ຊ່ວຍເດັກນ້ອຍຍິງ ແລະ ຊາຍໝົດທຸກຄົນ ໂດຍສະເພາະແມ່ນເດັກນ້ອຍດ້ອຍໂອກາດດ້ານການສຶກສາ ໃຫ້ສາມາດຮຽນຈົບຊັ້ນປະຖົມສຶກສາຢ່າງມີຄຸນນະພາບ, ສາມາດອ່ານອອກຂຽນໄດ້, ສາມາດນັບເລກພື້ນຖານ ແລະ ມີທັກສະຊີວິດທີ່ຈຳເປັນອື່ນໆ. ໃນທີ່ສຸດແລ້ວ ຫຼັກສູດນີ້ຍັງຈະຊ່ວຍໃຫ້ເຂົາເຈົ້າມີໂອກາດໃນຊີວິດຫຼາຍຂຶ້ນ.

ສສກ ໄດ້ຮັບການສະໜັບສະໜູນໂດຍລັດຖະບານອົດສະຕຣາລີ, ສະຫະພາບເອີຣົບ ແລະ ລັດຖະບານສະຫະລັດອາເມລິກາ ໂດຍຜ່ານແຜນງານບີຄວາ.

## ຂໍ້ມູນການຈັດຕັ້ງປະຕິບັດຫຼັກສູດ

### ບາດກ້າວການຈັດຕັ້ງປະຕິບັດທີ່ສຳຄັນ

| | |
|---|---|
| ມັງກອນ-ເມສາ | ຜະລິດສື່ການຮຽນການສອນ |
| ພຶດສະພາ-ມິຖຸນາ | ຝຶກອົບຮົມໃຫ້ທີມຄູຝຶກຫຼັກແຫຼ່ງ ແລະ ຄູຝຶກປະຈຳແຂວງ |
| ພຶດສະພາ-ສິງຫາ | ແຈກຢາຍສື່ການຮຽນການສອນໃຫ້ໂຮງຮຽນ |
| ກໍລະກົດ-ສິງຫາ | ຝຶກອົບຮົມຄູ |
| ກັນຍາ | ເລີ່ມເປີດສົກຮຽນໃໝ່ກັບຫຼັກສູດສະບັບປັບປຸງໃໝ່ |

### ຫຼັກສູດສະບັບປັບປຸງໃໝ່ຕາມສົກຮຽນ

| | |
|---|---|
| **2019-2020** | ຊັ້ນ ປ. 1 |
| **2020-2021** | ຊັ້ນ ປ. 2 |
| **2021-2022** | ຊັ້ນ ປ. 3 |
| **2022-2023** | ຊັ້ນ ປ. 4 |
| **2023-2024** | ຊັ້ນ ປ. 5 |

Australian Aid
European Union
USAID FROM THE AMERICAN PEOPLE

ແຜນງານບີຄວາແມ່ນແຜນງານທີ່ນຳພາໂດຍລັດຖະບານລາວ ໂດຍການສະໜັບສະໜູນຂອງ
ລັດຖະບານອົດສະຕຣາລີ, ສະຫະພາບເອີຣົບ ແລະ ລັດຖະບານສະຫະລັດອາເມລິກາ